# ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດ ທີ 26 ກຸມພາ 2006 ( 2-26-2006 )

---

## ຈົ່ງທຳສ່ວນທີ່ເປັນຂອງເຮົາ

**ຂໍ້ພຣະຄັມພີໃນບົດຮຽນ:** ຢຣມ 32:6-9,27-30,37-41

**ຄວາມຈິງໃນພຣະຄັມພີ:** ດ້ວຍຜ່ານການຟັງພຣະບັນຍັດຂອງພຣະເຈົ້າ ຄົນທີ່ເຊື່ອທັງຫລາຍໄດ້ເຂົ້າສ່ວນໃນພຣະປະສົງຂອງພຣະອົງ ຊຶ່ງເປັນເຫດຜົນອັນຍິ່ງໃຫຍ່ໄປກວ່າເຫດຜົນຂອງພວກເຮົາເອງ.

**ຜົນສະທ້ອນຕໍ່ຊີວິດ:** ບົດຮຽນນີ້ແມ່ນເພື່ອຊ່ອຍທ່ານໃຫ້ເຕີບໃຫຍ່ຂື້ນໃນການຮັບໃຊ້ພຣະເຈົ້າຢ່າງສັດຊື່ດ້ວຍ:

- ຮູ້ຈັກວ່າພຣະເຈົ້າມີແຜນການທີ່ຈະບັນຈຸເອົາທ່ານ; ແລະ
- ໃຫ້ທ່ານຍອມຮັບຟັງການຊີ້ບອກຂອງພຣະເຈົ້າທັງທີ່ໄດ້ເຂົ້າໃຈ ແລະບໍ່ໄດ້ເຂົ້າໃຈຢ່າງບໍຣິບູນຕໍ່ພຣະປະສົງຂອງພຣະອົງ.

## ເປັນຫຍັງສ່ວນຂອງເຮົາຈຶ່ງຢູ່ໃນແຜນການຂອງພຣະເຈົ້າ?

ນານປານໃດທີ່ທ່ານໄດ້ດີ້ນຣົນໃນການເລືອກໜ້າທີ່ການງານໃນຊີວິດຂອງທ່ານ? ທ່ານຈຳໄດ້ບໍ່ວ່າວິທີການນີ້ມັນເຈັບປວດພຽງໃດ? ຂ້າພະເຈົ້າຍັງຈຳໄດ້ເຖິງຄວາມບໍ່ສົມຫວັງ, ຄວາມຢ້ານກົວ, ແລະຄວາມບໍ່ແນ່ໃຈໃນການທີ່ບໍ່ຮູ້ຈັກວ່າຈະທຳສິ່ງໃດແທ້ໃນຊີວິດ. ໃນຂະນະທີ່ໄດ້ແນມເບິ່ງຄືນຫລັງຂ້າພະເຈົ້າຍັງໄດ້ເຫັນແຕ່ລະຊິ້ນແຫ່ງຄວາມຊຳນິຊຳນານໃນບັນຫາ, ຜົນຮັບ, ແລະການຝຶກຫັດທີ່ເຂົ້າກັບການງານໃນຊີວິດຂອງຂ້າພະເຈົ້າ. ພຣະເຈົ້າຊົງຮູ້ວ່າຂ້າພະເຈົ້າກຳລັງມຸ້ງໜ້າໄປສູ່ສິ່ງໃດ ແຕ່ວ່າຂ້າພະເຈົ້າເອງບໍ່ຮູ້ເລີຍ. ພວກເຮົາກຳລັງດີ້ນຣົນກັນຢູ່ບາງຄັ້ງບາງຄາວ, ເຖິງແມ່ນວ່າເຮົາຈະມີອາຍຸແກ່ແລ້ວກໍຕາມ, ໃນຂະນະທີ່ພວກເຮົາພະຍາຍາມທີ່ຈະພົບກັບແຜນການທີ່ພຣະເຈົ້າມີສຳລັບພວກເຮົາດຽວນີ້.

ພວກເຮົາສາມາດຕິດຕາມແບບຢ່າງຂອງເຢເຣມີຢາໃນການເຊື່ອ ໃນເມື່ອພວກເຮົາຍັງບໍ່ໄດ້ເຫັນຫຍັງຢ່າງແຈ່ມແຈ້ງໃນງານຂອງເຮົາໃນພາບລວມຂອງແຜນການພຣະເຈົ້າ. ພຣະເຈົ້ານັ້ນມີແຜນແທ້ສຳລັບພວກເຮົາ, ບໍ່ວ່າເຮົາຈະມີອາຍຸຊ່ຳໃດກໍຕາມ. ມັນເປັນເຣື່ອງຂອງເຮົາທີ່ຈະຄົ້ນໃຫ້ພົບເຫັນແລ້ວກໍຕາມແຜນການນັ້ນໄປ. ສິ່ງທີ່ພຣະເຈົ້າໄດ້ເອີ້ນເອົາຄົນທີ່ເຊື່ອເພື່ອມາຮ່ວມງານກັບແຜນການຂອງພຣະອົງ ແລະມີຄວາມເຂົ້າໃຈໃນຄວາມໝາຍອັນໃຫຍ່ສຳລັບຄົນສມັຍນີ້ ແລະຄົນໃນສມັຍໜ້າ.

## ສຶກສາພຣະຄັມພີ

### 1. ຈົ່ງຟັງຄວາມຢ່າງບໍ່ລໍ້ຊ້າ ( ຢຣມ 32:6-9 )

ຂໍ້ 1-5 ໃນພຣະທັມເຢເຣມີຢາບົດທີ 32 ໄດ້ອະທິບາຍເຣື່ອງຂອງການພະຍາກອນທີ່ບັນຈຸເອົາສ່ວນທີ່ຍັງເຫຼືອຂອງບົດນັ້ນ. ໃນປີ 588 ກ່ອນ ຄ.ສ. ກຸງເຢຣຸຊາເລັມໄດ້ຢູ່ພາຍໃຕ້ການຍຶດຄອງຈາກພວກບາບີໂລນ ແລະຜູ້ປະກາດພຣະທັມຂອງພຣະເຈົ້າກໍໄດ້ຖືກຈັບເປັນນັກໂທດໃນເດີ່ນພຣະຣາຊວັງ. ທຳອິດເພິ່ນໄດ້ຖືກຂັງລົງໃນອ່າງນ້ຳແຫ້ງ ແຕ່ຫລັງຈາກນັ້ນກໍໄດ້ລາກອອກມາແລ້ວກໍເອົາໄວ້ໃນບ່ອນຢູ່ດຽວນີ້ ( ຢຣມ 39:6-13 ). ເຈົ້າຊີວິດເຊເດເກັຽໄດ້ໃຫ້ຂັງເຢເຣມີຢາໄວ້ເພາະວ່າເພິ່ນໄດ້ເທສນາຕໍ່ສູ້ເມືອງເຢຣູຊາເລັມແລະເຈົ້າຊີວິດເອງ. ພວກຜູ້ນຳທັງຫລາຍກໍຄິດວ່າການເທສ

ນາຂອງເຢເຣມີຢາຈະເປັນທີ່ເຮັດໃຫ້ພວກທີ່ຕໍ່ສູ້ເພື່ອປ້ອງກັນເມືອງເຢຣູຊາເລັມຈາກມືຂອງພວກບາບີໂລນນັ້ນໄດ້ຂວັນເສັຽໄປ.

ບົດນີ້ໄດ້ບັນທຶກການກະທໍາຂອງເຢເຣມີຢາທີ່ບາງທີອາດມີຄວາມໝາຍພຽງເລັກນ້ອຍສໍາລັບຄົນທີ່ຢູ່ໃນຮຸ່ນດຽວກັນກັບເພິ່ນ. ເພິ່ນໄດ້ຊື້ນາທົ່ງນຶ່ງຈາກພີ່ນ້ອງຂອງເພິ່ນ. ການກະທໍາດັ່ງກ່າວນີ້ເປັນເຣື່ອງທີ່ບໍ່ໜ້າຕື່ນເຕັ້ນ, ແຕ່ວ່າຕື່ນເຕັ້ນໃນເວລາຕໍ່ມາ. ພວກບາບີໂລນໄດ້ພາກັນຍືນຢູ່ທີ່ປາກປະຕູເມືອງເຢຣູຊາເລັມ ແລະບໍ່ພໍດົນພວກເຂົາກໍໄດ້ພາກັນຄວບຄຸມເອົາໝົດແຜ່ນດິນແຫ່ງຢູດາຍ. ເຖິງຢ່າງໃດກໍດີ, ພາຍໃຕ້ເຫດການເຊັ່ນນີ້ຜູ້ປະກາດພຣະທັມຂອງພຣະເຈົ້າກໍຍັງໄດ້ຊື້ເອົາທົ່ງແຫ່ງນີ້ຢູ່ ເພາະວ່າພຣະເຈົ້າໄດ້ນໍາພາເພິ່ນໃຫ້ເຮັດເຊັ່ນນັ້ນ. ການກະທໍານັ້ນແມ່ນໄດ້ບອກໃຫ້ເຫັນເຖິງຄວາມເຊື່ອຂອງເພິ່ນວ່າ ໃນພາຍພາກໜ້ານັ້ນປະຊາຊົນຂອງພຣະອົງຈະໄດ້ກັບມາປົກຄອງແຜ່ນດິນນີ້ອີກ. ຮານາເມນ ລູກຊາຍຂອງຊານລູມຕ້ອງການຢາກໃຫ້ເຢເຣມີຢາຊື້ດິນຈາກລາວ ( ຂໍ້ 7 ). ທີ່ດິນນັ້ນໄດ້ຕັ້ງຢູ່ທີ່ອານາທົດ ຊຶ່ງເປັນເມືອງຂອງເຢເຣມີຢາເອງ. ຮານາເມນ, ຫລານຊາຍຂອງເຢເຣມີຢາໃນເວລານັ້ນຕົກຢູ່ໃນຂັ້ນອັຕະຄັດດ້ານການເງິນຈຶ່ງຈໍາເປັນຕ້ອງໄດ້ຂາຍດິນນີ້. ຫລານຄົນນັ້ນໄດ້ເຂົ້າມາຫາຜູ້ປະກາດພຣະທັມຂອງພຣະເຈົ້າເພາະວ່າເພິ່ນມີສິດທີຊື້ນານັ້ນ. ຕາມທັມນຽມຂອງພຣະສັນຍາເດີມນັ້ນ, ຍາດຜູ້ໃກ້ຊິດຄວນຈະຊື້ທີ່ດິນເມື່ອຄົນຂາຍນັ້ນຫາກເປັນພີ່ນ້ອງກັນ ( ລວ 25:25-28 ). ຈຸດປະສົງຂອງພຣະບັນຍັດນັ້ນກໍແມ່ນເພື່ອຈະໄດ້ຮັກສາທີ່ດິນນັ້ນໄວ້ສໍາລັບຄອບຄົວ.

ຢຣມ 32:8:16 ໄດ້ບັນທຶກການຊື້ຂາຍທີ່ໄດ້ເກີດຈາກການໂອນໃບຕາດິນກັນ. ຂໍ້ 8 ນັ້ນກໍປຽບເໝືອນກັນກັບຂໍ້ກ່ອນໆ ເວັ້ນເສັຽແຕ່ວ່າມັນຢາກຄ້າຍຄືກັບວ່າເປັນການເລັ່ງໃຫ້ຊື້ເອົາເປັນຂອງຕົນເອງ. ເຊັ່ນດຽວກັນຮານາເມນໄດ້ບອກເຢເຣມີຢາວ່າເພິ່ນໄດ້ມີສິດທີໃນການເປັນກັມມະສິດແລະການໄຖ່ຄືນ. ຜູ້ປະກາດພຣະທັມຂອງພຣະເຈົ້າບໍ່ພຽງແຕ່ໄດ້ເປັນຄົນທີ່ເຮັດຕາມໃຈຫລານຊາຍເທົ່ານັ້ນ; ເພິ່ນຍັງໄດ້ເປັນເຈົ້າຂອງສິ້ນສ່ວນທີ່ເປັນມໍຣະດົກອິສຣາເອັນທີ່ມາຈາກພຣະເຈົ້າດ້ວຍ. ດັ່ງທີ່ພຣະເຈົ້າໄດ້ສັນຍາແກ່ເຢເຣມີຢາວ່າ, ຮານາເມນໄດ້ມາຫາເຢເຣມີຢາດ້ວຍການສເນີຂາຍ. ອັນນີ້ໄດ້ເຮັດໃຫ້ຂ້າພະເຈົ້າເຊື່ອວ່າການສເນີຂາຍນັ້ນແມ່ນເປັນຈາກນໍ້າພຣະທັຍຂອງພຣະເຈົ້າແທ້ໆ, ດັ່ງນັ້ນເພິ່ນຈຶ່ງໄດ້ທໍາຕາມການສເນີຂາຍຂອງຫລານຊາຍຄົນນັ້ນ. ທັມມະດາແລ້ວ ເຢເຣມີຢາຍ່ອມຈະມີລາຍໄດ້ພໍເໝາະຈະຫາຊື້ທີ່ດິນນີ້ໄດ້.

ການຊື້ທັງໝົດຂອງທີ່ດິນນີ້ ຜູ້ປະກາດພຣະທັມໄດ້ຊັ່ງເງິນຄໍາເພື່ອເປັນການໃຊ້ຈ່າຍ. ເງິນທີ່ເປັນຫລຽນຍັງບໍ່ທັນໄດ້ໃຊ້ກັນຢ່າງທົ່ວເຖິງເທື່ອໃນຊາວຢິວຈົນກວ່າວ່າເວລາໄດ້ລ່ວງເລີຍມາອີກຊົ່ວລະຍະນຶ່ງ. ໃນທີ່ສຸດ ເງິນເຖິງ 17 ເຊກຽວເປັນທາດເງິນໄດ້ຖືກຊັ່ງໃຫ້ດ້ວຍຊິງ. ໃນເມື່ອເຮົາຫາກບໍ່ຮູ້ລາຄາຂອງເງິນຢ່າງຄັກແນ່ໃນເວລານັ້ນ ພວກເຮົາກໍບໍ່ສາມາດຈະຄິດໄລ່ໄດ້ຢ່າງແນ່ນອນວ່າເປັນເທົ່າໃດກັນແທ້ເມື່ອທຽບກັບເງິນທີ່ໃຊ້ຈ່າຍກັນໃນສມັຍນີ້. ຊໍ້າກວ່ານັ້ນພວກເຮົາຍັງບໍ່ຮູ້ຈັກວ່າລາຄາຂອງດິນຄິດໄລ່ກັນດ້ວຍວິທີໃດຈະເປັນຄວາມກວ້າງຫລືວ່າຂນາດດິນກັນແທ້. ສິ່ງທີ່ພໍຮູ້ໄດ້ແມ່ນທັງຮານາເມນແລະເຢເຣມີຢາໄດ້ຕັດສິນໃນເຫັນວ່າລາຄານັ້ນເປັນທັມຕໍ່ກັນ. ຄົນທີ່ໄດ້ຍື່ນໃບຕາດິນທີ່ຂຽນເອົາສໍາລັບເຢເຣມີຢານັ້ນແມ່ນບາຣຸກ ຊຶ່ງເປັນລູກຊາຍຂອງເນຣີຢາ ລູກຊາຍຂອງມາຊີອາ ( ຢຣມ 32:12 ).

ເປັນທີ່ບໍ່ຕ້ອງສົງສັຍວ່າຫລາຍຄົນທີ່ໄດ້ຍິນວ່າເຢເຣມີຢາໄດ້ຊື້ເອົາດິນນັ້ນ ຢາກຈະຮູ້ເຖິງຄວາມສລາດຝ່າຍການຄ້າ ຫລືບາງທີກໍແມ່ນເປັນເຣື່ອງສາມັນທັມມະດາຂອງເພິ່ນ. ເພິ່ນບໍ່ຈ່າຍຄ່າທີ່ດິນແພງເກີນໄປບໍເພາະໃນອີກບໍ່ດົນພວກບາບີໂລນກໍຈະມາຄອບຄອງແຖວນີ້? ບາງທີການຕິດຕາມພຣະເຈົ້າກໍໝາຍຄວາມວ່າທໍາໃນສິ່ງທີ່ຫາຄວາມໝາຍອັນໃດບໍ່ໄດ້ໃນຂະນະນັ້ນ. ໃນກໍຣະນີຂອງເຢເຣມີຢາເອງ ການເຫັນໃນທາງທີ່ດີຂອງເພິ່ນນັ້ນໄດ້ເປັນຮາງວັນແກ່ເພິ່ນ. ເຖິງແມ່ນວ່າພວກບາບີໂລນໄດ້ຍຶດຄອງແລະໄດ້ທໍາລາຍເຢຣູຊາເລັມໃນປີ 587 ກ່ອນ ຄ.ສ. ແຕ່ນີ້ກໍບໍ່ໄດ້ເປັນອະວະສານຂອງຢູດາ. ໃນປະມານຫ້າສິບກວ່າປີຕໍ່ມາພວກທີ່ຍັງເຫລືອຂອງພວກຢິວໄດ້ກັບມາຈາກບາບີໂລນເພື່ອມາຮຽກຮ້ອງເປັນກັມມະສິດທີ່ດິນຂອງພວກເຂົາຄືນ. ພຣະເຈົ້າຍັງສາມາດທໍາໃຫ້ການກະທໍາດ້ວຍຄວາມເຊື່ອບໍ່ເປັນໂມຄະໄປ ເຖິງແມ່ນວ່າໃນເວລາທີ່ພວກເຮົາອາດຢາກຈະຮູ້ວ່າພວກເຮົາກໍາລັງເຮັດນັ້ນຖືກຕ້ອງຫລືບໍ່ກໍຕາມ.

## 2. <u>ຈົ່ງຍອມທໍາຕາມຈຸດປະສົງຂອງພຣະເຈົ້າ</u> ( ຢຣມ 32:27-30 )

ຂໍ້ 17-25 ປະກອບດ້ວຍການອະທິຖານຈາກເຢເຣມີຢາ ຊຶ່ງໃນນັ້ນເພິ່ນໄດ້ເບິ່ງຄືນເຖິງເຣື່ອງຄວາມສັມພັນຂອງອິສຣະເອັນກັບພຣະເຈົ້າ ແລະຢາກຈະຮູ້ວ່າອານາຄົດຂອງພວກເຂົາຈະເປັນຢ່າງໃດ. ຂໍ້ 26-35 ໄດ້ບັນຈຸພາກສ່ວນນຶ່ງຂອງຄຳຕອບຂອງພຣະເຈົ້າເຖິງຜູ້ປະກາດພຣະທັມຂອງພຣະອົງ. ພຣະເຈົ້າຢາກຈະຍອມຖິ້ມເຢຣູຊາເລັມໃຫ້ແກ່ພວກການເດອາເພາະວ່າພວກອິສຣາເອັນໄດ້ກອນພຣະເຈົ້າໃຫ້ໂກດເຄືອງເພາະການບໍ່ຟັງຄວາມ ແລະການໄຫວ້ພຣະທຽມຂອງພວກເຂົາ.

ພຣະເຈົ້າໄດ້ຕອບການອະທິຖານຂອງເຢເຣມີຢາດ້ວຍການຕັກເຕືອນເພິ່ນວ່າພຣະອົງຊົງເປັນພຣະເຈົ້າ, ພຣະເຈົ້າຂອງເຊື້ອຊາດມະນຸດທັງປວງ. ໃນສຸດທ້າຍນັ້ນການເປັນພຣະເຈົ້າຂອງພຣະອົງໄດ້ແຜ່ຜາຍໄປທົ່ວປວງຊົນທັງໝົດລວມທັງພວກການເດອາດ້ວຍ. ພຣະເຈົ້າຈະໄດ້ໃຊ້ພວກນີ້ເພື່ອຈະໄດ້ຄວບຄຸມພວກໄພ່ພົນຂອງພຣະອົງຊົ່ວຂະນະນຶ່ງ. ໃນຂະນະດຽວກັນນັ້ນ ພຣະອົງຈະໄດ້ສະຖິດຢູ່ນຳພວກໄພ່ພົນຂອງພຣະອົງໃນສະພາບການທີ່ຫຽ້ງຍາກຂອງເຂົາໃນປະເທດອື່ນ. ຄຳຖາມຂອງພຣະເຈົ້າ, ມີຫຽັງແດ່ທີ່ຍາກສຳລັບເຮົາ? ເປັນຄຳຖາມທີ່ລໍຄຳຕອບໄປໃນທາງລົບ. ເຢເຣມີຢາໄດ້ຮັບຮູ້ຄວາມຈິງໃນເຣື່ອງນີ້ແລ້ວໃນຄຳອະທິຖານຂອງເພິ່ນ ( ຂໍ້ 17 ).

ຄຳວ່າ " ຕັ້ງແຕ່ນີ້ໄປ " ບອກວ່າພຣະເຈົ້າກຳລັງຈະທຳໂດຍອີງໃສ່ຄຳເວົ້າຂອງພຣະອົງໃນຂໍ້ກ່ອນນີ້. ເຫດຜົນອັນສະເພາະເຈາະຈົງຂອງການກະທຳຂອງພຣະອົງແມ່ນພົບໃນຂໍ້ 30-35. ຈະເວົ້າອີກຢ່າງນຶ່ງ ກໍແມ່ນພຣະເຈົ້າຈະເອົາເມືອງນີ້ຍົກໃຫ້ພວກການເດອາ. ຕົ້ນກຳເນີດຂອງຄຳວ່າ " ການເດອາ " ໝາຍເຖິງພວກຕາອັນອອກກາງຫລາຍເຜົ່າທີ່ໄດ້ຍ້າຍລົງໄປໃນພາກໃຕ້ຂອງເມໂຊໂປຕາເມັຽ ( ດຽວນີ້ແມ່ນປະເທດອີຣັກ ) ໃນຣະຫວ່າງ ປີ 1000 ແລະ 900 ກ່ອນ ຄ.ສ. ໃນຄັ້ງແຣກພວກເຂົາເຈົ້າຢູ່ເປັນເຜົ່າແຕ່ໃນທີ່ສຸດກໍໄດ້ກາຍເປັນພວກບາບີໂລນ. ກະສັດເນບູກັດເນັດຊາໄດ້ປົກຄອງບາບີໂລນຈາກ ປີ 605 ( ຫລື 602 ) ກ່ອນ ຄ.ສ. ຈົນເຖິງປີ 562 ກ່ອນ ຄ.ສ.

ພຣະທັມ ເຢເຣມີຢາ ( ບົດທີ 52 ) ແລະ ຜູ້ຂຽນ ພຣະທັມ 2 ກະສັດ ( ບົດທີ 25 ) ໄດ້ບອກລາຍລະອຽດເຖິງເຣື່ອງຂອງກະສັດເນບູກັດເນັດຊາຍຶດຄອງເອົາກຸງເຢຼູຊາເລັມ. ພຣະເຈົ້າໄດ້ຕັກເຕືອນວ່າພວກສັຕຣູຈະໄດ້ເຜົາຜານເມືອງນີ້ ແລະຈະໄດ້ເຜົາບ້ານເຮືອນໄປພ້ອມໆກັນ. ສິ່ງນີ້ກໍໄດ້ເກີດຂຶ້ນແທ້ແກ່ກຸງເຢຣູຊາເລັມໃນປີ 587 ກ່ອນ ຄ.ສ. ( ຢຣມ 52:12-13 ; 2 ກະສັດ 25:8-9 ). ຍັງມີບາງຢ່າງທີ່ຖືກຕ້ອງກວ່າໃນເຣື່ອງການເຜົາຜານດ້ວຍໄຟເມື່ອພວກຊາວຢູດາຍຈູດກະທູບບູຊາພະບາອານທີ່ຫລັງຄາບ້ານ. ເຢເຣມີຢາໄດ້ຕັກເຕືອນແລ້ວຕັກເຕືອນອີກຫລາຍຄັ້ງວ່າປະຊາຊົນທັງຫລາຍບໍ່ຄວນຈະຖວາຍເຫລົ້າຢາສຳລັບພຣະຕ່າງໆ, ຮັບໃຊ້ພຣະເຫລົ່ານັ້ນ, ຫລືວ່າຈູດກະທູບບູຊາພຣະເຫລົ່ານັ້ນ ( ຢຣມ 11:13,17: 19:4-5 ).

ການອ້າງອີງເຖິງພວກອິສຣາເອັນບອກໃຫ້ຮູ້ວ່າ ພວກຢູດາຍບໍ່ສາມາດຈະຫວັງຊາຕາກັມອັນໃດດີໄປກວ່າຊາດທີ່ເປັນເອື້ອຍນ້ອງຂອງອິສຣາເອັນ ( ອານາຈັກພາກເໜືອ ). ພວກອັດຊີເຣັຽໄດ້ທຳລາຍຊາມາເຣັຽ, ເມືອງເອກຂອງອານາຈັກພາກເໜືອໃນປີ 722 ກ່ອນ ຄ.ສ. ແລະໄດ້ຮວບເອົາຄົນໄປເຖິງ 27,000 ຄົນ. ຊາຕາກັມຢ່າງດຽວກັນນີ້ໄດ້ລໍຖ້າຊາວຢູດາຖ້າຫາກວ່າພວກເຂົາຫາກບໍ່ຍອມຖິ້ມໃຈເກົ່າເອົາໃຈໃໝ່. ການກະທຳຂອງພວກອິສຣາເອັນບໍ່ຈຳເປັນຕ້ອງເວົ້າເຖິງພຽງແຕ່ພຣະທຽມເທົ່ານັ້ນ ແຕ່ວ່າຮອດການປະພຶດກະທຳຂອງຊາດດ້ວຍ.

ພຣະເຈົ້າຈະໃຊ້ທຸກຢ່າງທີ່ຈຳເປັນສຳລັບຈະເຮັດໃຫ້ພຣະປະສົງຂອງພຣະອົງສຳເຣັດລົງໃນຊີວິດຂອງຄົນທັງຫລາຍທີ່ໄດ້ຕິດຕາມພຣະອົງ. ບາງເທື່ອສິ່ງນັ້ນອາດຈະເປັນການເຈັບປວດ, ເຊັ່ນການເນຣະເທດສຳລັບຊາວຢູດາຍ. ແຕ່ປານນັ້ນ, ໃນລະຍະຍາວພຣະເຈົ້າກໍໄດ້ກະທຳສິ່ງທີ່ດີທີ່ສຸດສຳລັບພວກເຮົາ.

## 3. <u>ຈົ່ງວາງໃຈຕາມແຜນການຂອງພຣະເຈົ້າ</u> ( ຢຣມ 32:37-41 )

ພຣະປະສົງຂອງພຣະເຈົ້າທີ່ໄດ້ອະນຸຍາດໃຫ້ຊາວຢູດາຖືກຈັບໄປເປັນຊະເລີຍນັ້ນບໍ່ແມ່ນການຕັດສິນລົງໂທດໃນຕົວຂອງມັນເອງ ຫາກແຕ່ແມ່ນການລົງໂທດທີ່ມີຈຸດປະສົງຕາມມາ. ໄພ່ພົນຂອງພຣະອົງຈະໄດ້ຮຽນຮູ້ວ່າການບໍ່ຟັງຄວາມຕໍ່ພຣະເຈົ້ານັ້ນມີການລົງໂທດດ້ວຍລາຄາແພງຕາມມາ ແລະການສັດຊື່ຕໍ່ພຣະອົງນັ້ນຈະໄດ້ຮັບຣາງວັນ. ພຣະເຈົ້າອົງດຽວກັນນີ້ທີ່ໄດ້ເນຣະເທດໄພ່ພົນຂອງພຣະອົງນັ້ນ ຈະໄດ້ຕ້ອນເອົາພວກເຂົາກັບມາຍັງແຜ່ນດິນຂອງເຂົາ

ແລະນຳເຂົາມາຍັງແຜ່ນດິນດັ້ງເດີມຂອງເຂົາ ( ອາດຈະແມ່ນກຸງເຢຣູຊາເລັມ ). ພຣະອົງທີ່ໄດ້ສະແດງຄວາມໂກດຮ້າຍ ແລະຄວາມກິ້ວໂກດອັນໃຫຍ່ຈະໄດ້ທຳໃຫ້ເຂົາໄດ້ດຳຣົງຊີວິດຢູ່ໃນຄວາມສງົບຄືນອີກ. ເບິ່ງເຫມືອນວ່າຂໍ້ 38 ໄດ້ເວົ້າຄວາມຈິງເຣື່ອງນີ້. ພວກອິສຣາເອັນ ( ຈາກສມັຍຂອງໂມເຊ ) ເປັນໄພ່ພົນຂອງພຣະເຈົ້າ ແລະພຣະອົງກໍເປັນພຣະເຈົ້າຂອງພວກເຂົາແມ່ນບໍ່? ອັນນີ້ຄືພຣະສັນຍາທີ່ວ່າຄວາມສັມພັນຣະຫວ່າງພຣະເຈົ້າແລະໄພ່ພົນຂອງພຣະອົງກໍຈະໄດ້ເປັນຈິງ ແລະມີຜົນສືບຕໍ່ໄປເລື້ອຍໆແທນທີ່ຈະໄປແດ່ຢຸດແດ່.

ພຣະເຈົ້າໄດ້ໃຫ້ພຣະສັນຍາເຣື່ອງຄວາມເປັນອັນນຶ່ງອັນດຽວກັນຕໍ່ໄພ່ພົນຂອງພຣະອົງ. ພວກເຂົາມີໃຈດຽວແລະຫົນທາງອັນດຽວ; ທີ່ວ່າ ຄວາມເປັນໄປຢ່າງຄົງເສັ້ນຄົງວາຂອງການເປັນມະນຸດພາຍໃນ, ທັງກັບພວກເຂົາເອງແລະກັບພຣະເຈົ້າດ້ວຍ, ແລະມີຄວາມເປັນອັນນຶ່ງອັນດຽວຕໍ່ຄວາມປະສົງໃນຊີວິດ. ອັນນີ້ມັນຈະນຳພວກເຂົາມາເຖິງຄວາມຢ້ານຢຳພຣະເຈົ້າທີ່ພວກເຂົາໄດ້ນັບຖື, ໄດ້ຮັກ, ແລະໄດ້ນະມັສການພຣະອົງ. ການປະພຶດກະທຳອັນນີ້ຕໍ່ພຣະເຈົ້ານັ້ນມັນທັງເປັນຄວາມດີສຳລັບເຂົາເອງ ແລະທັງສຳລັບພວກລູກຫລານຂອງເຂົາທີ່ຈະມາຕາມຫລັງດ້ວຍ. ການຟັງຄຳສັ່ງຂອງພຣະເຈົ້າຈະໄດ້ນຳມາຊຶ່ງຄວາມຖືກຕ້ອງ ແລະຄວາມຍຸດຕິທັມຕໍ່ຄົນອື່ນ, ແລະເປີດໂອກາດໃຫ້ພຣະເຈົ້າອວຍພອນແກ່ຄົນທີ່ເຊື່ອຟັງດ້ວຍ.

ນອກຈາກນັ້ນ ບັນດາຣຸ່ນຄົນທີ່ຕິດຕາມມາຈະໄດ້ມີຄວາມຊົມຊື່ນຍິນດີກັບພຣະພອນແລະລາຍຮັບທີ່ພໍ່ແມ່ຂອງພວກເຂົາໄດ້ມາຈາກການເຊື່ອຟັງພຣະເຈົ້າ. ກຸນແຈສຳລັບຄວາມສັມພັນອັນດີຣະຫວ່າງພຣະເຈົ້າແລະໄພ່ພົນຂອງພຣະອົງ ແມ່ນການໃຫ້ມີພຣະສັນຍາອັນຍັ້ງຍືນ. ພຣະສັນຍາທີ່ພຣະເຈົ້າໄດ້ທຳເພາະການເຊື່ອຟັງຕໍ່ພຣະເຈົ້າ ( ອພຍ 19:5-6 ). ເຖິງຢ່າງໃດກໍດີ ໃນເບື້ອງຕົ້ນພວກອິສຣາເອັນບໍ່ໄດ້ຢູ່ໃນພາຍໃຕ້ພຣະສັນຍາ ( ອພຍ 32 ). ດຽວນີ້ພຣະເຈົ້າໄດ້ສັນຍາວ່າຈະສ້າງພຣະສັນຍາໃຫມ່ກັບພວກອິສຣາເອັນ ( ຢຣມ 31:31-34 ).

ຢຣມ 32:41 ໄດ້ບັນທຶກວ່າການສເລີມສລອງຢ່າງປິຕິຍິນດີຂອງພຣະເຈົ້າໃນການສ້ອມແປງໃຫ້ດີຄືນໃຫມ່ຂອງພວກອິສຣາເອັນຕໍ່ບ້ານເມືອງຂອງເຂົາຫລັງຈາກຖືກເນຣະເທດ. ພຣະເຈົ້າໄດ້ສັນຍາຈະທຳສິ່ງທີ່ດີສຳລັບເຂົາແລະວາງຮາກເຫງົ້າຂອງພວກເຂົາຄືນໃຫມ່ໃສ່ແຜ່ນດິນນີ້. ເຫມືອນດັ່ງຊາວນາມີຄວາມຊົມຊື່ນຍິນດີຫລັງຈາກການປູກຝັງໄດ້ສຳເຣັດລົງ, ພຣະເຈົ້າຈະໄດ້ເບິ່ງແຍງພວກເຂົາ, ພອນດິນເຂົາ, ແລະສ້າງສະພາບແວດລ້ອມທຸກຢ່າງໃຫ້ດີເພື່ອວ່າໄພ່ພົນຂອງພຣະອົງຈະໄດ້ມີຄວາມສງົບສຸກ. ອັນນີ້ຈະບໍ່ມີການພະຍາຍາມຢ່າງທັມມະດາໃນຝ່າຍຂອງພຣະເຈົ້າ. ພຣະອົງຈະໄດ້ສຣະທຸກຢ່າງທັງນ້ຳພຣະທັຍແລະຈິດໃຈໃນງານສຳຄັນອັນນີ້.

ການກະທຳຂອງພຣະເຈົ້າຕໍ່ພວກອິສະເອັນນັ້ນໄດ້ຝັງຮາກມາຈາກພຣະສັນຍາເຣື່ອງຄວາມສັມພັນຕໍ່ພວກເຂົາແລະເປັນເຣື່ອງການໄຖ່ໃຫ້ພົ້ນຕາມທັມມະຊາດ. ເຖິງປານນັ້ນພວກເຮົາຈຶ່ງສາມາດເພິ່ງຄວາມຮັກ ແລະຈຸດປະສົງໄຖ່ໃຫ້ພົ້ນຂອງພຣະອົງສຳລັບເຮົາທັງໃນປະຈະບັນແລະໃນອານາຄົດດ້ວຍ.

ເຢເຣມີຢາໄດ້ຊື້ທີ່ດິນເພາະວ່າເພິ່ນຄິດວ່າພຣະເຈົ້າໄດ້ນຳພາເພິ່ນໃຫ້ເຮັດດັ່ງນັ້ນ. ໃນຂະນະນັ້ນ ມັນບໍ່ໄດ້ເປັນເຫມືອນວ່າການກະທຳທີ່ສລາດສຳລັບເພິ່ນ. ພຣະເຈົ້າໄດ້ໃຫ້ຊາວບາບີໂລນຄອບຄຸມຢູດາຍແລະຊາວກຸງເຢຣູຊາເລັມເພາະວ່າໄພ່ພົນຂອງພຣະອົງໄດ້ເຮັດໃຫ້ພຣະເຈົ້າກິ້ວໂກດດ້ວຍການບໍ່ຟັງຄວາມແລະການຫລິ້ນຊູ້ຂອງພວກເຂົາ. ເຖິງຢ່າງໃດກໍດີ ພຣະເຈົ້າໄດ້ສັນຍາວ່າຈະຟື້ນໄພ່ພົນຂອງພຣະອົງໃຫ້ດີຄືນໃຫມ່ໃນແຜ່ນດິນທີ່ເປັນບ້ານເກີດຂອງເຂົາ ແລະຈະໄດ້ຕັ້ງພຣະສັນຍາໃຫມ່ໃຫ້ກັບເຂົານຳດ້ວຍ.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.com ແປໂດຍ V.S.